ທະນາຄານແຫ່ງ ສປປ ລາວ
BANK OF THE LAO PDR
ຂ່າວ NEWS
ພະແນກຂໍ້ມູນຂ່າວສານ ແລະ ປະຊາສຳພັນ, ຫ້ອງການ ທຫລ
ໂທ/ແຟັກ 856 21 213109, 213110

# ທະນາຄານແຫ່ງ ສປປ ລາວ ເຜີຍແຜ່ຄຳສັ່ງ ນາຍົກລັດຖະມົນຕີ ວ່າດ້ວຍການຈັດຕັ້ງປະຕິບັດ ການຄຸ້ມຄອງເງິນຕາຕ່າງປະເທດ




ໃນຕອນເຊົ້າຂອງວັນທີ 21 ກໍລະກົດ 2023 ກົມຄຸ້ມຄອງເງິນຕາຕ່າງປະເທດ, ທະນາຄານແຫ່ງ ສປປ ລາວ (ທຫລ) ໄດ້ຈັດຕັ້ງກອງປະຊຸມເຜີຍແຜ່ຄຳສັ່ງນາຍົກລັດຖະມົນຕີ ວ່າດ້ວຍການຈັດຕັ້ງປະຕິບັດການຄຸ້ມຄອງເງິນຕາຕ່າງປະເທດ ຂຶ້ນ, ໂດຍການເປັນປະທານຂອງທ່ານ ເພັດສະຖາພອນ ແກ້ວວົງວິຈິດ ຫົວໜ້າກົມຄຸ້ມຄອງເງິນຕາຕ່າງປະເທດ ພ້ອມດ້ວຍການເຂົ້າຮ່ວມຂອງບັນດາຄະນະກົມພາຍໃນ ທຫລ, ຄະນະສາຂາ ທຫລ ປະຈຳພາກ, ທະນາຄານທຸລະກິດ ແລະ ພາກສ່ວນທີ່ກ່ຽວຂ້ອງ.

ຈຸດປະສົງໃນການຈັດກອງປະຊຸມໃນຄັ້ງນີ້, ແມ່ນເປັນການຜັນຂະຫຍາຍຄຳສັ່ງນາຍົກລັດຖະມົນຕີວ່າດ້ວຍການຈັດຕັ້ງປະຕິບັດການຄຸ້ມຄອງເງິນຕາຕ່າງປະເທດ ສະບັບເລກທີ 10/ນຍ, ລົງວັນທີ 14 ກໍລະກົດ 2023 ແລະ ປຶກສາຫາລືເພື່ອປະກອບຄຳເຫັນໃນການຈັດຕັ້ງປະຕິບັດຕົວຈິງໃຫ້ເກີດປະສິດທິຜົນສູງສຸດ. ພ້ອມດຽວກັນນີ້, ຍັງເປັນການຈັດຕັ້ງຜັນຂະຫຍາຍກົດໝາຍວ່າດ້ວຍການຄຸ້ມຄອງເງິນຕາຕ່າງປະເທດ (ສະບັບປັບປຸງ) ທີ່ໄດ້ຜ່ານການຮັບຮອງຈາກສະພາແຫ່ງຊາດໃນວັນທີ 7 ກໍລະກົດ ປີ 2022. ສະເພາະຄຳສັ່ງນາຍົກລັດຖະມົນຕີສະບັບດັ່ງກ່າວນີ້ ແມ່ນແນໃສ່ຄຸ້ມຄອງການຄອບຄອງເງິນຕາຕ່າງປະເທດຂອງບຸກຄົນ ຫຼື ນິຕິບຸກຄົນ ພາຍໃນ ສປປ ລາວ ໃຫ້ເຂົ້າສູ່ລະບົບ ເພື່ອສ້າງຄວາມເຂັ້ມແຂງໃຫ້ລະບົບທະນາຄານ ແລະ ຍັງເປັນການຮັກສາສະເຖຍລະພາບຂອງເງິນຕາ ອີກດ້ວຍ. ໂດຍ ທຫລ ໄດ້ຮັບການມອບໝາຍໃຫ້ອອກນິຕິກຳກ່ຽວກັບການຄອບຄອງເງິນຕາຕ່າງປະເທດໃນຮູບແບບເງິນຝາກເພື່ອເປັນ

ບ່ອນອີງໃຫ້ທະນາຄານທຸລະກິດ ລະດົມບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງພາຍໃນ ແລະ ຕ່າງປະເທດ ທີ່ມີພູມລຳເນົາຢູ່ ສປປ ລາວ ໃຫ້ນຳເງິນຕາຕ່າງປະເທດຝາກໄວ້ນຳທະນາຄານທຸລະກິດທີ່ຕັ້ງຢູ່ ສປປ ລາວ ເພື່ອຮັບປະກັນຄວາມປອດໄພ ແລະ ສອດຄ່ອງກັບກົດໝາຍ, ໃນຕໍ່ໜ້າ ທຫລ ຈະຕ້ອງໄດ້ອອກບົດແນະນຳ, ລະບຽບຫຼັກການ,... ເພື່ອເປັນບ່ອນອີງໃນການຈັດຕັ້ງປະຕິບັດຕົວຈິງ. ນອກຈາກນີ້, ທຫລ ຍັງຈະໄດ້ປັບປຸງລະບົບການຊຳລະພາຍໃນປະເທດໃນຮູບແບບເອເລັກໂຕຣນິກທີ່ເປັນເງິນຕາຕ່າງປະເທດໃຫ້ມີຂອບເຂດຈະແຈ້ງ, ມີກົນໄກການຢັ້ງຢືນທຸລະກຳຖືກຕ້ອງຕາມຈຸດປະສົງຂອງການຊຳລະທີ່ແທ້ຈິງ, ອຳນວຍຄວາມສະດວກໃຫ້ແກ່ການຄ້າຜ່ານຊ່ອງທາງເອເລັກໂຕຣນິກ ໂດຍກຳນົດໃຫ້ຊຳລະຄ່າສິນຄ້າ ແລະ ຄ່າບໍລິການ ເປັນເງິນກີບຢູ່ ສປປ ລາວ.



ກອງປະຊຸມໄດ້ສຳເລັດລົງພາຍໃນວັນດຽວກັນ, ຜູ້ເຂົ້າຮ່ວມໄດ້ມີການປຶກສາຫາລືຮ່ວມກັນ ແລະ ປະກອບຄຳເຫັນຢ່າງຈະແຈ້ງ, ກົງໄປກົງມາ ເຮັດໃຫ້ກອງປະຊຸມດັ່ງກ່າວໄດ້ຮັບໝາກຜົນເປັນຢ່າງດີ.

#ຂ່າວ: ວັນປະເສີດ ສີມບູນຂັນ.

#ພາບ: ແຂກ ມູນລະໄມ.

## ເສດຖະກິດລາວຈະເຂັ້ມແຂງ ຖ້າປວງຊົນຮ່ວມແຮງນຳໃຊ້ເງິນກີບ